## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 12 ພະຈິກ 2006 ( 11-12-2006 )

---

# <u>ດຳເນີນຊີວິດໃນຄວາມສວ່າງ, ບໍ່ຢູ່ໃນຄວາມມືດ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ເອຊາຢາ 8:18-9:1-7

**<u>ຄວາມຈິງໃນພຣະຄັມພີ:</u>** ພຣະເຈົ້າໄດ້ໃຫ້ຄວາມສວ່າງໂດຍຜ່ານທາງພຣະຄຳຂອງພຣະອົງ ແລະຜ່ານຄວາມຍິ່ງໃຫຍ່ໂດຍທາງພຣະບຸດຂອງພຣະອົງຄື ພຣະເຢຊູຄຣິດ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ແມ່ນເພື່ອຊ່ອຍໃຫ້ທ່ານມີປະສົບການໃນການດຳເນີນຊີວິດທີ່ມີຄວາມສັມພັນທີ່ພຣະເຈົ້າຈະຊົງປະທານໃຫ້ໂດຍ:

- ມີການອະທິບາຍເຖິງວິທີທາງການຕໍ່ສູ້ກັບພຣະວິນຍານແຫ່ງຄວາມມືດໃນການດຳເນີນຊີວິດໃນທຸກວັນນີ້.
- ມີການຂອບພຣະຄຸນພຣະເຈົ້າເພາະພຣະອົງໄດ້ຊົງປະທານພຣະບຸດ ເພື່ອໃຫ້ເປັນແສງສວ່າງໃຫ້ແກ່ໂລກ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## <u>ບົດນຳ:</u>

1). ເພື່ອຄວາມກະຈ່າງແຈ້ງຕໍ່ການຮຽນບົດຮຽນນີ້ ຂໍໃຫ້ຄຣູອະທິບາຍກ່ຽວກັບແສງສະວ່າງຂອງໄຟສາຍສູ່ນັກຮຽນຟັງ. **ຄຳຖາມ:** ມີທາງໃດທີ່ມືດທີ່ສຸດ ແລະເປັນທາງທີ່ທ່ານຢ້ານທີ່ສຸດຂອງທ່ານ ? ທ່ານມີແສງສະວ່າງຊ່ອຍໃນການດຳເນີນຊີວິດຂອງທ່ານແລ້ວຫລືບໍ່ ?

**ອະທິບາຍ:** ເວລາຊົນຊາດອິສຣາເອນມີຄວາມຢ້ານກົວສັດຣູຂອງເຂົາມາທຳລາຍ ເຂົາກໍກັບໄປຫາພຣະເຈົ້າໃຫ້ຊ່ອຍພວກເຂົາ

### ຂ້ອຍຈະພັທນາຄວາມເຊື່ອໃຫ້ຢູ່ໃນແສງສວ່າງໄດ້ຢ່າງໃດ?

## 1. ກັບຄືນຫາພຣະເຈົ້າ ແລະພຣະຄໍາຂອງພຣະອົງ ( ເອຊາຢາ 8:18-22 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ ເອຊາຢາ 8:18-22

2) **ຄໍາຖາມ:** ຄວາມຢ້ານອັນແຮງກ້າຂອງຄົນອິສຣາເອນແມ່ນຫຍັງ, ແລະເວລາເຂົາຢ້ານເຂົາໄປຫາໃຜຊ່ອຍ ?

3) **ອະທິບາຍ:** ກ. ບອກນັກຮຽນວ່າ ໃນທຸກມື້ນີ້ມີຄົນຂອງເຮົາມີຄວາມຢ້ານກົວຫລາຍປະເພດແຕກຕ່າງກັນ. ເພື່ອເປັນການສ້າງສັນໃນຫ້ອງຮຽນ ໃຫ້ນັກຮຽນຍົກຕົວຢ່າງຄວາມຢ້ານກົວສຂື້ນມາແລ້ວຂຽນລົງໃນກະດານ.
ຂ. ແຈກຢາຍເຈັ້ຽ (ບັດ) ໃຫ້ນັກຮຽນຂຽນສິ່ງທີ່ເຂົາຢ້ານ ຫລືຢ້ຳເກງທີ່ສຸດ ເຊັ່ນ ຄວາມມືດ, ວິນຍານມືດ........

4) **ຖາມ:** ໃນເມື່ອທ່ານຫາກປະເຊີນກັບຄວາມມືດ ຄວາມຢ້ານ ຫລືຖືກໂຈມຕີຈາກສັດຣູ ທ່ານຈະໄປຫາຄວາມຊ່ອຍເຫລືອນໍາໃຜ ?

5)**ອະທິບາຍ:** ຕາມພຣະຄໍາກ່າວໄວ້ວ່າ " ຂ້າພະເຈົ້າຈະຢູ່ທີ່ນີ້ກັບພວກລູກທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງປະທັບຢູ່ບັນລັງເທິງພູຊີໂອນ ຂ້າພະເຈົ້າກັບພວກລູກເປັນເໝືອນພຣະທັມທີ່ເປັນໝາຍສໍາຄັນ ຕໍ່ຊາວອິສຣາເອນ. ແຕ່ບາງຄົນຈະບອກໃຫ້ທ່ານຖາມເອົາຄວາມຈາກໝໍດູ ແລະໝໍຜີ, ທ່ານເອຊາຢາບອກວ່າ "ຈົ່ງຟັງພຣະທັມທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ຢ່າຟັງຄວາມຜີ ເພາະວ່າສິ່ງທີ່ເຂົາບອກໃຫ້ເຈົ້າເຮັດນັ້ນມັນບໍ່ດີ."

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>: ເອຊາຢາ 8:18-22

1) ຄວາມຢ້ານກົວອັນໃດທີ່ຊົນຊາດອິສຣາເອນຢ້ານກົວທີ່ສຸດ? ແລະເຂົາໄປຮຽກຮ້ອງຜູ້ໃດມາຊ່ອຍເຂົາ ?

2) ຄົນສມັຍນີ້ເຂົາຢ້ານກົວຫຍັງຫລາຍທີ່ສຸດ? ທ່ານຈະສາມາດແນະນໍາຄົນອື່ນທີ່ກໍາລັງປະສົບກັບຄວາມຢ້ານກົວໃຫ້ກັບມາຫາພຣະເຈົ້າໄດ້ບໍ່?

3) ການຂົ່ມເຫັງແບບໃດທີ່ຄຣິສຕຽນທົ່ວໂລກກໍາລັງປະເຊີນຢູ່ໃນເວລານີ້?

4) ທ່ານເຊື່ອໝັ້ນບໍວ່າພຣະເຈົ້າຈະນໍາຄວາມສະວ່າງເຂົ້າມາໃນຄວາມມືດແຫ່ງຊີວິດຂອງທ່ານ?

## 2. ເບິ່ງພຣະເຈົ້າເພື່ອຈະໄດ້ກະທໍາຕາມ: ( ເອຊາຢາ 9:1-5 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ເອຊາຢາ 9:1-5

2) ໃຫ້ຍົກເອົາຂໍ້ນຶ່ງໃນບົດທີ 9 ວິຈັຍວ່າໄພ່ພົນຂອງພຣະເຈົ້າຈະໄດ້ຮັບຕວາມເມດຕາສົງສານ ແລະໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າ.

3) ໃຫ້ຂຽນຂໍ້ຄວາມ ອະດີດ ແລະອະນາຄົດໃສ່ໃນກະດານ ໃຫ້ນັກຮຽນຄົ້ນຄົ້ວເຣື່ອງການທໍາງານຂອງພຣະເຈົ້າໃນສອງຊ່ວງນີ້ຜ່ານທາງທາງຜູ້ປະກາດພຣະທັມເອຊາຢາວ່າຢ່າງໃດ?

4) **ຄໍາຖາມ:** ພຣະເຢຊູຄຣິດໄດ້ຊົງເປັນແສງສວ່າງນໍາພວກເຮົາອອກຈາກຄວາມມືດໂດຍທາງໃດ?

5) ໃຫ້ຈັດເປັນ 3 ກຸ່ມໃນຫ້ອງຮຽນ. ກຸ່ມທີ 1 ໃຫ້ເອົາຂໍ້ 3, ກຸ່ມທີ 2 ໃຫ້ເອົາຂໍ້ 4 ແລະກຸ່ມທີ 3 ໃຫ້ເອົາຂໍ້ 5 ໃຫ້ແຕ່ລະກຸ່ມໄປຄົ້ນຄົ້ວ
(1) ບັນລະຍາຍໃນເຣື່ອງ ແມ່ນຫຍັງທີ່ພຣະເຈົ້າແນະນໍາໄພ່ພົນຂອງພຣະອົງ, (2) ໃຫ້ຊອກຫາຂໍ້ທີ່ສນັບສນູນໃນພຣະຄັມພີໃໝ່ ແລະ (3) ບອກຄວາມເປັນຈິງນີ້ໃຫ້ແກ່ຜູ້ທີ່ເຊື່ອທຸກຄົນ. ( ຂໍ້ 3 ເປັນຄວາມຊົມຊື່ນຍິນດີ, ຂໍ້ 4 ເປັນອິສສະຣະຈາກການກົດຂີ່ຂົ່ມເຫັງ ແລະຂໍ້ທີ 5 ເປັນຄວາມສັນຕິສຸກ)

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u> ເອຊາຢາ 9:1-5

1. ເອຊາຢາເວົ້າວ່າ ເປັນຫຍັງພຣະເຈົ້າຈຶ່ງໃຫ້ໄພ່ພົນຂອງພຣະອົງຍ່າງຢູ່ໃນຄວາມມືດ?
2. ເປັນດ້ວຍເຫດໃດພຣະເຢຊູຈຶ່ງເປັນແສງສະວ່າງໃຫ້ແກ່ຄວາມມືດນັ້ນ?
3. ໃນຊີວິດຂອງທ່ານມີທາງໃດແດ່ທີ່ເຮັດໃຫ້ທ່ານໄດ້ຮັບຄວາມຊື່ນຊົມຍິນດີ, ມີສັນຕິສຸກ ແລະມີອິສຣະພາບຈາກການກົດຂີ່ຂົ່ມເຫັງ?

**3. <u>ດຳເນີນຊີວິດຢູ່ໃນແສງສະວ່າງຂອງພຣະເຈົ້າຜູ້ຊົງຍິ່ງໃຫຍ່:</u>** ( ເອຊາຢາ 9:6-7 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ເອຊາຢາ 9:6-7

2) **ຄຳຖາມ:** ພຣະເຈົ້າໄດ້ວາງແຜນການຢ່າງໃດໃນການທີ່ຈະສົ່ງແສງສະວ່າງຂອງພຣະອົງລົງມາໃສ່ໄພ່ພົນຂອງພຣະອົງ?.

3) **ອະທິບາຍ:** ໃນຂະນະພຣະເມສານ້ອຍສະເດັດມາເປັນເບບີ້ ພຣະອົງກໍຊົງເປັນຜູ້ໃຫຍ່ຢູ່ແລ້ວ ເພາະໃນຈຳນວນນຶ່ງໃນນາມຊື່ຂອງພຣະອົງນັ້ນເປັນພຣະເຈົ້າຜູ້ຊົງຣິດອຳນາດ ອີກຢ່າງນຶ່ງພຣະອົງກໍຊົງເປັນພຣະເຈົ້າອົງທ່ຽງແທ້.

4) **ຄຳຖາມ:** ທ່ານສາມາດນຳເຣື່ອງຄວາມຍິ່ງໃຫຍ່ຂອງພຣະອົງໄປບອກກັບຄົນທີ່ຍັງບໍ່ທັນເຊື່ອໄດ້ບໍ່?

5) ຂຽນຫົວຂໍ້ເຣື່ອງພຣະເມສາຈາກພຣະທັມເອຊາຢາບົດທີ 9:6 ໃສ່ກະດານ, ໃຊ້ການບັນລະຍາຍຄວາມເປັນມາຂອງພຣະເມສາໃຫ້ລະອຽດແຈ່ມແຈ້ງ ວ່າພຣະອົງເປັນໃຜ?

6) **ອະທິບາຍ:** ພຣະຜູ້ເປັນເຈົ້າຊົງພູມໃຈໄພ່ພົນຂອງພຣະອົງໃຫ້ມີຄວາມພຽນອົດທົນໃນຍາມທີ່ເຂົາໄດ້ມີຄວາມທໍ້ຖອຍ ໃຫ້ຮູ້ຈັກແສງສວ່າງຂອງໂລກ ພຣະອົງກໍຈະນຳເອົາແສງສວ່າງແຫ່ງພຣະວິນຍານບໍຣິສຸດສ່ອງເຍືອງນຳທາງອັນແສນມືດມົນຂອງເຂົາເຊັ່ນກັນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u> ເອຊາຢາ 9:6-7

1. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງສົ່ງພຣະເຢຊູຄຣິດເຈົ້າເຂົ້າມາໃນໂລກນີ້? ເພາະເຫດໃດ?
2. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງໃຫ້ສິດທິຄວາມຍິ່ງໃຫຍ່ແກ່ພຣະເຢຊູຄຣິດ? ແຕ່ລະສິດທິມີຄວາມໝາຍຢ່າງໃດສຳລັບທ່ານ?
3. ແມ່ນຫຍັງແດ່ເປັນໜ້າທີ່ການງານຂອງພຣະເຢຊູຄຣິດ? ໜ້າທີ່ການງານຂອງພຣະອົງຈະສຳເຣັດໃນເມື່ອໃດ?
4. ສຸດທ້າຍຄຳໝັ້ນສັນຍາຂອງພຣະເຈົ້າກໍເປັນຈິງ ແລະໄດ້ຊັຍຊະນະ, ສລູບແລ້ວຊັຍຊະນະມີຄວາມໝາຍສຳລັບທ່ານບໍ່?

**<u>ສລູບ</u>:**

1. **ອະທິບາຍ:** ໃຫ້ຄຳພະຍານສັ້ນ ໆໃນເຣື່ອງຄວາມມືດມົນສັບສົນໃນຊີວິດຂອງທ່ານເອງເຊັ່ນ: ເວລາເຈັບປ່ວຍ, ການຕາຍຂອງຜູ້ທີ່ທ່ານຮັກ, ຕົກງານ, ບັນຫາໃນຄອບຄົວ ແລະອື່ນ ໆ. .
2. ຄວາມເຊື່ອຂອງທ່ານໄດ້ເຮັດໃຫ້ແສງສະວ່າງສ່ອງເຂົ້າໄປໃນຊີວິດອັນມືດມົນສັບສົນຂອງທ່ານຫລືບໍ່?
3. ໃນເວລາທີ່ຜ່ານມາພຣະເຈົ້າໄດ້ຊົງເປັນຫ່ວງ ແລະໄດ້ຊົງໃຫ້ຄວາມຫວັງໃນອະນາຄົດແກ່ທ່ານຫລືບໍ່?
4. ຜູ້ທີ່ເຊື່ອ ແລະກັບຄືນມາຫາພຣະອົງກໍຈະໄດ້ຮັບການຕອບສນອງຈາກພຣະເຈົ້າ.
5. ພຣະເຈົ້າຈະກະທຳທຸກຢ່າງແກ່ໄພ່ພົນຂອງພຣະອົງເຊັ່ນ: ໃຫ້ຄວາມຫວັງແກ່ເຂົາ, ຊ່ອຍໃນການດຳຣົງຊີວິດຂອງເຂົາໃຫ້ມີຄວາມສຸກແລະອື່ນ ໆ..
6. ອະທິຖານປິດຫ້ອງຮຽນ

ອຸປຖັມໂດຍ ລາວບັບຕິສສັມພັນ www.lsbf.org ແປໂດຍ J.H.